ສະບັບວັນທີ 06.06.2018

**ເອກະສານຊ້ອນທ້າຍ1:**

# ບົດປະເມີນຜົນກະທົບຂອງຮ່າງນິຕິກຳ

**<u>ໄລຍະຂອງບົດປະເມີນຜົນກະທົບຂອງຮ່າງນິຕິກຳ</u>**

| | |
|---|---|
| ຂັ້ນເລີ່ມຕົ້ນ | ☐ ວັນສົ່ງໃຫ້ກະຊວງຍຸຕິທຳ/ພະແນກຍຸຕິທຳ ເພື່ອກວດກາ ແລະໃຫ້ຄຳແນະນຳ.................... |
| ຂັ້ນທາບທາມຄຳເຫັນ | ☐ ວັນປັບປຸງຄືນເພື່ອນຳໄປທາບທາມຄຳເຫັນໃນໄລຍະ 60 ວັນ.............. |
| ຂັ້ນສຸດທ້າຍ | ☐ ວັນສົ່ງໃຫ້ກະຊວງຍຸຕິທຳ/ພະແນກຍຸຕິທຳ ເພື່ອໃຫ້ຄຳເຫັນ...... ... |
| ຂັ້ນສຸດທ້າຍ | ☐ ວັນສຳເລັດການປັບປຸງ ເພື່ອພິມເຜີຍແຜ່...................................... |

## 1. ຂໍ້ມູນຕິດຕໍ່ພົວພັນ

- ຊື່ ກະຊວງ/ອົງການ: ກະຊວງອຸດສາຫະກຳ ແລະ ການຄ້າ
- ທີ່ຕັ້ງ ຂອງກະຊວງ/ອົງການ: ກົມນະໂຍບາຍການຄ້າຕ່າງປະເທດ
- ເບີໂທ ແລະ ອີເມວ: 021 450065; v.xindavong@laoftpd.com
- ພະນັກງານຮັບຜິດຊອບ: ນ. ວິໄລພອນ ຊິນດາວົງ, ຫົວໜ້າພະແນກການຄ້າຫຼາຍ, ກົມນະໂຍບາຍການຄ້າຕ່າງປະເທດ

## 2. ຂໍ້ມູນສະຫຼຸບ

**2.1 ລາຍລະອຽດຂອງຮ່າງນິຕິກຳ**

- ຊື່ນິຕິກຳ: ກົດໝາຍວ່າດ້ວຍ ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ
- ປະເພດນິຕິກຳ: ກົດໝາຍ ☑ສ້າງໃໝ່ ☐ ປັບປຸງ
- ກຳນົດເວລາໃນການສ້າງນິຕິກຳໃຫ້ສຳເລັດ (ນັບແຕ່ວັນສ້າງ ແລະ ປັບປຸງ, ວັນທາບທາມຄຳເຫັນ, ວັນຕົກ ລົງເຫັນດີ, ວັນສົ່ງໃຫ້ ກະຊວງຍຸຕິທຳ/ພະແນກຍຸຕິທຳ, ລັດຖະບານ, ສະພາແຫ່ງຊາດ ແລະອື່ນໆ):
    1. ສຳເລັດບົດສະເໜີສ້າງກົດໝາຍ ພ້ອມດ້ວຍແຜນສ້າງກົດໝາຍ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ສົ່ງໃຫ້ສະພາແຫ່ງຊາດໃຫ້ສາມາດເຂົ້າໃນວາລະເດືອນ ເມສາ 2019.
    2. ສຳເລັດສ້າງຕັ້ງຄະນະຄົ້ນຄວ້າຮ່າງກົດໝາຍວ່າດ້ວຍ ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ (ເດືອນສິງຫາ 2017).
    3. ປັບປຸງຄະນະຄົ້ນຄວ້າຮ່າງກົດໝາຍວ່າດ້ວຍ ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ (ເດືອນພຶດສະພາ 2018).
    4. ຈັດກອງປະຊຸມພາຍໃນຄະນະຮັບຜິດຊອບຮ່າງກົດໝາຍ ເພື່ອປຶກສາຫາລືກ່ຽວກັບ ໂຄງສ້າງ ແລະ ເນື້ອໃນຂອງກົດໝາຍ (ເດືອນມິຖຸນາ 2018).
    5. ຈັດກອງປະຊຸມເປີດກ້ວາງເພື່ອຮັບຟັງຄຳເຫັນຈາກພາກລັດ ແລະ ທຸລະກິດ ທົ່ວປະເທດ (ເດືອນກໍລະກົດ-ສິງຫາ 2018).
    6. ສຳເລັດຮ່າງກົດໝາຍວ່າດ້ວຍການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ, ສະບັບທຳອິດ (ເດືອນສິງຫາ 2018).
    7. ຈັດກອງປະຊຸມປຶກສາຫາລື ກັບ ກົມກົດໝາຍ, ກະຊວງຍຸຕິທຳ ເພື່ອຜ່ານເນື້ອໃນກ່ອນເຂົ້າກອງ

ປະຊຸມລັດຖະບານ (ເດືອນກັນຍາ 2018).

8. ຈັດສຳມະນາໃຫ້ບັນດາຄະນະກຳມະທິການຕ່າງໆ ປະຈຳສະພາແຫ່ງຊາດ (ເດືອນຕຸລາ 2018).
9. ສົ່ງຮ່າງກົດໝາຍເຂົ້າວາລະກອງປະຊຸມລັດຖະບານ (ເດືອນທັນວາ 2018).
10. ປັບປຸງຮ່າງກົດໝາຍໂດຍອີງຕາມຄຳເຫັນຂອງກອງປະຊຸມລັດຖະບານ ແລະ ຈັດກອງປະຊຸມພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ (ເດືອນກຸມພາ-ມີນາ 2019).
11. ສົ່ງຮ່າງກົດໝາຍເຂົ້າວາລະກອງປະຊຸມສະພາແຫ່ງຊາດ (ເດືອນເມສາ 2019).
12. ສະພາຮັບຮອງ ແລະ ປະທານປະເທດອອກລັດຖະດຳລັດ (ເດືອນພຶດສະພາ 2019).
13. ແປກົດໝາຍເປັນພາສາອັງກິດ ແລະ ເຜີຍແຜ່ກົດໝາຍລົງໃນເວບໄຊຂອງຈົດໝາຍເຫດທາງລັດຖະການ ພາຍໃນ 15 ວັນ ມີຜົນບັງຄັບໃຊ້ກົດໝາຍ (ເດືອນມິຖຸນາ 2019).

**2.2 ນິຕິກຳທີ່ກ່ຽວຂ້ອງ:**

ກ່ຽວຂ້ອງກັບພັນທະຂອງ ສປປ ລາວໃນການເຂົ້າເປັນສະມາຊິກ ອຄລ ເປັນຫຼັກ. ກົດໝາຍສະບັບນີ້ ຍັງກ່ຽວຂ້ອງກັບກົດໝາຍວ່າດ້ວຍພາສີ ທີ່ກຳນົດກ່ຽວກັບການນຳໃຊ້ມາດຕະການຢູ່ຊາຍແດນ, ການເກັບກຳສະຖິຕິດ້ານການຄ້າ ແລະ ດຳລັດວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າ.

**2.3 ຜົນກະທົບຂອງນິຕິກຳ ຕໍ່ທຸລະກິດ** ☐ໜ້ອຍ ☑ຫຼາຍ ☐ ບໍ່ມີ

ນິຕິກຳ ຈະສົ່ງຜົນກະທົບທີ່ສຳຄັນ ແລະ ເອື້ອອຳນວຍຕໍ່ທຸລະກິດທີ່ກ່ຽວຂ້ອງກັບການຜະລິດສິນຄ້າຢູ່ ສປປ ລາວ ຊຶ່ງອາດຈຳເປັນຕ້ອງໄດ້ຮັບການປົກປ້ອງຈາກການແຂ່ງຂັນທີ່ບໍ່ເປັນທຳຈາກສິນຄ້ານຳເຂົ້າໃນໄລຍະເວລາໃດໜຶ່ງ ຫຼື ຕະຫຼອດໄປຈົນກວ່າຄວາມເສຍຫາຍຢ່າງຮ້າຍແຮງຂອງອຸດສາຫະກຳພາຍໃນຈະໄດ້ຮັບການແກ້ໄຂ. ໃນຂະນະດຽວກັນກົດໝາຍນີ້ ກໍຈະສົ່ງຜົນກະທົບດ້ານລົບຕໍ່ຜູ້ນຳເຂົ້າສິນຄ້າມາຍັງ ສປປ ລາວ ເພາະຕ້ອງເສຍພາສີເພີ່ມຂຶ້ນພາຍຫຼັງທີ່ຖືກມາດຕະການຕ້ານການທຸ່ມຕະຫຼາດ ແລະ ການອຸດໜູນ.

**2.4 ຜົນກະທົບຂອງນິຕິກຳຕໍ່ງົບປະມານແຫ່ງລັດ** ☑ໜ້ອຍ ☐ ຫຼາຍ ☐ ບໍ່ມີ

ຮຽກຮ້ອງໃຫ້ມີການນຳໃຊ້ງົບປະມານຂອງລັດເພີ່ມເຕີມ ເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຕ້ານການທຸ່ມຕະຫຼາດ ແລະ ການອຸດໜູນ, ໂດຍສະເພາະແມ່ນຂະບວນການດຳເນີນການສືບຫາຂໍ້ມູນ. ແຕ່ວ່າ ຜົນກະທົບຕໍ່ງົບປະມານຈະມີໜ້ອຍ ຍ້ອນວ່າ ການຈັດຕັ້ງປະຕິບັດກົດໝາຍ ສາມາດດຳເນີນໂດຍອີງການຈັດຕັ້ງທີ່ມີຢູ່ແລ້ວເປັນຕົ້ນຕໍ ຕົວຢ່າງ ເຊັ່ນ: ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກົມພາສີຂອງ ສປປ ລາວ.

## 3. ການອະທິບາຍຫຍໍ້ກ່ຽວກັບຮ່າງນິຕິກຳ

**3.1 ເປົ້າໝາຍ:**

(ຂໍ້ແນະນຳ-ອະທິບາຍລາຍລະອຽດກ່ຽວກັບບັນຫາ, ລະດັບຄວາມສຳຄັນ ແລະ ຄວາມສ່ຽງທີ່ຈະເກີດຈາກບັນຫາ ແລະ ຫຼັກຖານທີ່ເຮັດໃຫ້ບັນຫາ ແລະ ຄວາມສ່ຽງນັ້ນເກີດຂຶ້ນ)

ເປົ້າໝາຍຂອງກົດໝາຍສະບັບນີ້ ເພື່ອປົກປ້ອງຜູ້ຜະລິດພາຍໃນທີ່ໄດ້ຮັບຜົນກະທົບຮ້າຍແຮງຈາກການທຸ້ມຕະຫຼາດ ແລະ ການອຸດໜູນ ຂອງປະເທດທີ່ສົ່ງອອກມາຍັງ ສປປ ລາວ ຊຶ່ງຮູບແບບການທຸ້ມຕະຫຼາດນັ້ນ ຈະແມ່ນການສົ່ງອອກສິນຄ້າໃນລາຄາທີ່ຕໍ່າກວ່າຕະຫຼາດພາຍໃນຂອງຕົນ; ສໍາລັບການອຸດໜູນ ແມ່ນລັດຖະບານຂອງປະເທດດັ່ງກ່າວ ໃຫ້ການສະໜັບສະໜູນ ຫຼື ການຊ່ວຍເຫຼືອທາງດ້ານການເງິນ ບໍ່ວ່າທາງກົງ ຫຼື ທາງອ້ອມຕໍ່ພາກເອກະຊົນ ໃນການເພີ້ມປະລິມານການສົ່ງອອກສິນຄ້າໄປຕ່າງປະເທດ ຫຼື ຫຼຸດປະລິມານການນໍາເຂົ້າສິນຄ້າຈາກຕ່າງປະເທດ ເພື່ອຍາດແຍ່ງເອົາສ່ວນແບ່ງຕະຫຼາດຂອງປະເທດຄູ່ຄ້າ, ເຮັດໃຫ້ອຸດສາຫະກໍາພາຍໃນຂອງປະເທດຄູ່ຄ້າ ບໍ່ສາມາດແຂ່ງຂັນກັບສິນຄ້ານໍາເຂົ້າໄດ້ ແລະ ກໍໃຫ້ເກີດຄວາມເສຍຫາຍທີ່ຮ້າຍແຮງຕໍ່ການຜະລິດພາຍໃນຈາກການຄ້າທີ່ບໍ່ເປັນທໍາດັ່ງກ່າວ. ສະນັ້ນ, WTO ຈຶ່ງອະນຸຍາດໃຫ້ປະເທດສະມາຊິກ ສາມາດນໍາໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ເມື່ອເຫັນວ່າຜູ້ຜະລິດພາຍໃນໄດ້ຮັບຄວາມເສຍຫາຍຮ້າຍແຮງຈາກສິນຄ້ານໍາເຂົ້າ. ສໍາລັບໄລຍະເວລາໃນການນໍາໃຊ້ 02 ມາດຕະການດັ່ງກ່າວນີ້, ສາມາດນໍາໃຊ້ພາຍໃນເວລາ 05ປີ ພາຍຫຼັງມີການສືບຫາຂໍ້ມູນຢ່າງຈະແຈ້ງວ່າມີການທຸ້ມຕະຫຼາດ ແລະ ໄດ້ຮັບການອຸດໜູນ ຂອງປະເທດສົ່ງອອກທີ່ແທ້ຈິງ ຫຼື ຖ້າມີການທົບທວນວ່າຜູ້ຜະລິດພາຍໃນຍັງມີຄວາມເສຍຫາຍຢູ່ ສາມາດນໍາໃຊ້ມາດຕະການດັ່ງກ່າວຈົນກວ່າຄວາມເສຍຫາຍຢ່າງຮ້າຍແຮງຂອງຜູ້ຜະລິດພາຍໃນຈະໄດ້ຮັບການແກ້ໄຂ.

### 3.2 ຈຸດປະສົງ

(ຂໍ້ແນະນໍາ - ເວົ້າເຖິງນະໂຍບາຍຂອງນິຕິກໍາ ລວມທັງ ສາຍພົວພັນ ລະຫວ່າງ ນະໂຍບາຍດັ່ງກ່າວກັບນະໂຍບາຍລວມ ຂອງລັດຖະບານ;

ຈຸດປະສົງຂອງກົດໝາຍ ແມ່ນເພື່ອ (1) ໃຫ້ມີການປົກປ້ອງທຸລະກິດ, ຜູ້ຜະລິດ ຫຼື ອຸດສາຫະກໍາທີ່ຜະລິດສິນຄ້າຢູ່ ສປປ ລາວ ໃນກໍລະນີມີການຍາດແຍ່ງເອົາສ່ວນແບ່ງຕະຫຼາດຂອງປະເທດຄູ່ຄ້າ, ເຮັດໃຫ້ຜູ້ຜະລິດພາຍໃນຂອງ ສປປ ລາວ ບໍ່ສາມາດແຂ່ງຂັນກັບສິນຄ້ານໍາເຂົ້າໄດ້ ແລະ ໃນທີ່ສຸດກໍ່ລົ້ມລະລາຍ; ແລະ (2) ປະຕິບັດກົດກະຕິກາການຄ້າລະຫວ່າງປະເທດໃຫ້ສອດຄ່ອງກັບຫຼັກການຂອງ WTO.

### 3.3 ຮ່າງນິຕິກໍາທີ່ສະເໜີສ້າງ

(ຂໍ້ແນະນໍາ-ບອກລາຍລະອຽດກ່ຽວກັບລັກສະນະຂອງຮ່າງນິຕິກໍາ ແລະອະທິບາຍເປັນຫຍັງຈຶ່ງເລືອກຮ່າງນິຕິກໍານີ້ ຖ້າທຽບໃສ່ທາງເລືອກອື່ນເຊັ່ນ ຜົນປະໂຫຍດສູງສຸດທີ່ໄດ້ຮັບ, ຄວາມສອດຄ່ອງກັບສະພາບຕົວຈິງຂອງລາວ ແລະ ບັນຫາອື່ນ)

<u>ເງື່ອນໄຂພື້ນຖານ</u>

ກົດໝາຍວ່າດ້ວຍ ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຈະເຮັດໃຫ້ລັດຖະບານຂອງ ສປປ ລາວ ສາມາດນໍາໃຊ້ມາດຕະການຕອບໂຕ້ຕໍ່ສິນຄ້ານໍາເຂົ້າທີ່ໄດ້ຮັບການທຸ້ມຕະຫຼາດ ແລະ ການອຸດໜູນຈາກລັດຖະບານຂອງປະເທດສົ່ງອອກ ເພື່ອຈໍາກັດການນໍາເຂົ້າສິນຄ້າໃນກໍລະນີທີ່ສິນຄ້ານໍາເຂົ້າຫາກເພີ່ມຂຶ້ນ ແລະ ເຮັດໃຫ້ ຫຼື ຈະເຮັດໃຫ້ເກີດຄວາມເສຍຫາຍທີ່ຮ້າຍແຮງຕໍ່ຜູ້ຜະລິດພາຍໃນ (ສິນຄ້າຖືກຕັດ ຫຼື ກົດລາຄາ, ກໍາໄລຫຼຸດລົງ, ສ່ວນແບ່ງຕະຫຼາດຫຼຸດລົງ ແລະ ອື່ນໆ) ພາຍໃຕ້ສະພາບການເປີດກວ້າງທາງດ້ານເສດຖະກິດກໍ່ຄືການ

ເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ. ເຖິງຢ່າງໃດກໍຕາມ, ການຈຳກັດດັ່ງກ່າວນີ້ ສາມາດນຳໃຊ້ໃນໄລຍະເວລາໃດໜຶ່ງ ຫຼື ຕະຫຼອດໄປຈົນກວ່າຄວາມເສຍຫາຍຢ່າງຮ້າຍແຮງຂອງອຸດສາຫະກຳພາຍໃນຈະໄດ້ຮັບການແກ້ໄຂ.

<u>ເຫດຜົນສຳລັບການເລືອກນຳໃຊ້ມາດຕະການນີ້</u>

ໃນກໍລະນີການແຂ່ງຂັນຈາກການນຳເຂົ້າທີ່ສົ່ງຜົນເສຍຫາຍ ມີຄື (1) ບໍ່ເຮັດຫຍັງ ແລະ ປ່ອຍໃຫ້ຜູ້ຜະລິດພາຍໃນລົ້ມລະລາຍ; ຫຼື (2) ນຳໃຊ້ມາດຕະການຈຳກັດປະລິມານການນຳເຂົ້າ ຫຼື ຫ້າມການນຳເຂົ້າ ຊຶ່ງບໍ່ສອດຄ່ອງກັບຫຼັກການຂອງ WTO ຊຶ່ງອາດຈະເຮັດໃຫ້ເກີດມີການຕອບໂຕ້ຈາກຄູ່ຄ້າ. ດັ່ງນັ້ນ ການນຳໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ຕອບໂຕ້ການອຸດໜູນຂອງລັດຖະບານ ໂດຍການເກັບອັດຕາພາສີເພີ່ມຂຶ້ນຈາກສູດຄິດໄລ່ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສັນຍາທີ່ສອດຄ່ອງກັບຫຼັກການຂອງ WTO ຈຶ່ງເປັນທາງເລືອກທີ່ດີທີ່ສຸດຂອງ ສປປ ລາວ.

## 4. ຜົນກະທົບທີ່ຄາດຄະເນ

### 4.1 ຄາດຄະເນຜົນກະທົບຕໍ່ ສປປ ລາວ ແລະ ສັງຄົມ

(ຂໍ້ແນະນຳ-ພິຈາລະນາຜົນກະທົບທັງໝົດທີ່ອາດເກີດຂຶ້ນຈາກນິຕິກຳທີ່ສະເໜີສ້າງເຊັ່ນຕໍ່ເສດຖະກິດ, ສິ່ງແວດລ້ອມ, ການຈ້າງງານ, ສຸຂະພາບ, ຄວາມປອດໄພ ແລະ ຂະໜາດ /ລະດັບຂອງແຕ່ລະຜົນກະທົບ)

ຜົນກະທົບໂດຍລວມຂອງກົດໝາຍວ່າດ້ວຍ ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຈະເປັນປະໂຫຍດໃຫ້ແກ່ການຮັກສາສະຖຽນລະພາບທາງດ້ານເສດຖະກິດໂດຍລວມ, ເຮັດໃຫ້ໜໍ່ແໜງການຜະລິດພາຍໃນມີການປັບຕົວຕໍ່ສະພາບການແຂ່ງຂັນ, ຂະຫຍາຍຕົວ, ການຈ້າງງານເພີ່ມຂຶ້ນ ເຊິ່ງເປັນຜົນດີໃຫ້ແກ່ການເກັບລາຍຮັບຂອງລັດຖະບານ. ເຖິງຢ່າງໃດກໍຕາມ, ການນຳໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ຕອບໂຕ້ການອຸດໜູນ ຕໍ່ສິນຄ້າໃດໜຶ່ງກໍ່ຕ້ອງໄດ້ມີການຄົ້ນຄວ້າຕີລາຄາເຖິງຜົນກະທົບຕໍ່ ຜູ້ບໍລິໂພກ ແລະ ກຸ່ມຄົນອື່ນໆ ຢ່າງຈະແຈ້ງເພື່ອຫຼີກລ້ຽງຜົນກະທົບໃນດ້ານລົບທີ່ອາດເກີດຂຶ້ນໄດ້.

### 4.2 ຄາດຄະເນຜົນກະທົບຕໍ່ທຸລະກິດ

(ພິຈາລະນາຜົນກະທົບທັງໝົດທີ່ອາດເກີດຂຶ້ນຈາກນິຕິກຳທີ່ສະເໜີສ້າງ ຕໍ່ປະເພດ, ກຸ່ມ ແລະຂະໜາດຂອງທຸລະກິດ ລວມທັງ ຂະໜາດ/ລະດັບຂອງແຕ່ລະຜົນກະທົບ)

ຜົນກະທົບດ້ານເສດຖະກິດຂອງກົດໝາຍວ່າດ້ວຍ ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ທີ່ມີຕໍ່ຜູ້ຜະລິດພາຍໃນ ແລະ ພະນັກງານຂອງວິສາຫະກິດຈະມີໃນດ້ານບວກ ເຮັດໃຫ້ລາຄາສິນຄ້າມີການປັບຕົວຂຶ້ນ, ອັດຕາກຳໄລເພີ່ມຂຶ້ນ, ສ່ວນແບ່ງຕະຫຼາດເພີ່ມຂຶ້ນ, ມີໄລຍະເວລາໃນການຟື້ນຕົວ ແລະ ປັບປຸງຜະລິດຕະພັນຂອງຕົນໃຫ້ສາມາດແຂ່ງຂັນກັບສິນຄ້າທີ່ມີການທຸ້ມຕະຫຼາດ. ກະທົບດ້ານເສດຖະກິດທີ່ມີຕໍ່ຜູ້ສົ່ງອອກ ແລະ ຜູ້ນຳເຂົ້າຈາກຕ່າງປະເທດໃນສິນຄ້າປະເພດດຽວກັນຈະມີໃນດ້ານລົບ ເຮັດໃຫ້ຖືກກຳນົດອັດຕາພາສີນຳເຂົ້າທີ່ສູງຂຶ້ນ ແລະ ປະລິມານການຂາຍສິນຄ້າຫຼຸດລົງ. ຂະໜາດຂອງຜົນກະທົບ ຈະຂຶ້ນກັບບໍລິມາດຂອງການຄ້າຕາມ

ແຕ່ລະກໍລະນີ. ຈະບໍ່ມີຜົນກະທົບດ້ານສິ່ງແວດລ້ອມ.

**4.3 ຜົນສະທ້ອນທີ່ອາດເປັນໄປໄດ້ກ່ຽວກັບເງື່ອນໄຂໃນການປະຕິບັດຕາມລະບຽບກົດໝາຍ ແລະ ຄ່າສິ້ນເປືອງ**

(ຂໍ້ແນະນຳ-ເຮັດເປັນລາຍການທຸລະກິດ ທີ່ຮຽກຮ້ອງໃຫ້ປະຕິບັດຕາມນິຕິກຳທີ່ສະເໜີສ້າງ ແລະ ຄ່າສິ້ນເປືອງສະເລັ່ຍ ຕໍ່ບໍລິສັດໃນຂັ້ນເລີ່ມຕົ້ນ ແລະ ໃນແຕ່ລະປີ, ຕົວຢ່າງ: ຄ່າສິ້ນເປືອງໃນການປະຕິບັດຕາມລະບຽບການຕ່າງໆ ເຊັ່ນ ການຂໍ ໃບອະນຸຍາດ, ການຈັດຝຶກອົບຮົມ, ການເກັບກຳບັນທຶກຕ່າງໆ, ການຈັດຊື້ ແລະການແຈ້ງການ ຫຼື ເຜີຍແຜ່ຕໍ່ສັງຄົມ/ລັດຖະບານ)

ບໍ່ມີຕົ້ນທຶນໃນການຈັດຕັ້ງປະຕິບັດໂດຍລວມສຳລັບທຸລະກິດ ສະເໜີນຳໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ແຕ່ອາດຈະມີຕົ້ນທຶນໃນການເກັບກຳ ແລະ ສະໜອງຂໍ້ມູນ ເພື່ອນຳໃຊ້ເປັນຫຼັກຖານໃນການປະກອບເອກະສານເພື່ອສະເໜີນຳໃຊ້ມາດຕະການ. ແຕ່ວ່າທຸລະກິດທີ່ນຳເຂົ້າສິນຄ້າ ພາຍໃຕ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ແມ່ນຈະມີຜົນກະທົບດ້ານການນຳເຂົ້າສິນຄ້າ ຄື: ເສຍພາສີນຳເຂົ້າໃນອັດຕາເພີ່ມຂຶ້ນ.

**4.4 ຄາດຄະເນຜົນກະທົບຕໍ່ລັດຖະບານ**

(ຂໍ້ແນະນຳ-ພິຈາລະນາຜົນກະທົບທີ່ອາດເກີດຂຶ້ນຈາກນິຕິກຳທີ່ສະເໜີສ້າງ ໃນລະດັບຕ່າງໆຂອງລັດຖະບານ ເຊັ່ນ: ລະດັບສູນກາງ, ທ້ອງຖິ່ນ ແລະ ຂະໜາດຂອງແຕ່ລະຜົນກະທົບ)

ການຮັບຮອງກົດໝາຍວ່າ ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຈະສົ່ງຜົນກະທົບດ້ານບວກຕໍ່ລັດຖະບານ ທັງໃນຂັ້ນສູນກາງ ແລະ ແຂວງ ແລະ ທ້ອງຖິ່ນ ຍ້ອນວ່າ ສປປ ລາວ ຈະມີກົນໄກທີ່ຖືກຮັບຮອງຈາກສາກົນ ສຳລັບການປົກປ້ອງການຜະລິດພາຍໃນ ຈາກການແຂ່ງຂັນຈາກສິນຄ້ານຳເຂົ້າທີ່ສົ່ງຜົນເສຍຫາຍທີ່ຮ້າຍແຮງ ເຊິ່ງຈະເຮັດໃຫ້ການນຳໃຊ້ມາດຕະການອື່ນທີ່ບໍ່ສອດຄ່ອງກັບສັນຍາສາກົນເຊັ່ນ: ການຫ້າມການນຳເຂົ້າ ຫຼື ນຳໃຊ້ໂຄຕ້າ ນັບມື້ນັບຫຼຸດໜ້ອຍຖອຍລົງ.

ຜົນກະທົບດ້ານລົບ ຈະແມ່ນການສ້າງລາຍຈ່າຍເພີ່ມເຕີມຈຳນວນໜຶ່ງ ໃຫ້ແກ່ລັດຖະບານ ຢູ່ຂັ້ນສູນກາງໃນການຄຸ້ມຄອງການດຳເນີນການສືບຫາຂໍ້ມູນ ແລະ ການນຳໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ.

**4.5 ຜົນສະທ້ອນທີ່ອາດເປັນໄປໄດ້ກ່ຽວກັບເງື່ອນໄຂຈຳເປັນໃນການບໍລິຫານ ແລະ ຄ່າສິ້ນເປືອງ**

(ຂໍ້ແນະນຳ-ກຳນົດລາຍລະອຽດທີ່ລັດຖະບານ ຈະຕ້ອງເຮັດ ເພື່ອບໍລິຫານຈັດການ ແລະຈັດຕັ້ງປະຕິບັດນິຕິກຳ ທີ່ສະ ເໜີສ້າງ ລວມທັງ ຄ່າສິ້ນເປືອງທັງໝົດ ທີ່ຄາດວ່າຈະເກີດຂຶ້ນໃນເບື້ອງຕົ້ນ ແລະໃນແຕ່ລະປີ. ຕົວຢ່າງ: ຄ່າສິ້ນເປືອງກ່ຽວ ກັບຄ່າບໍລິຫານ ລວມທັງຄ່າສິ້ນເປືອງໃນການຈັດຕັ້ງປະຕິບັດນິຕິກຳ, ຄ່າສິ້ນເປືອງໃນການອະນຸມັດ, ຂໍອະນຸຍາດຕ່າງໆ, ການຈັດຝຶກອົບຮົມ, ການເກັບກຳບັນທຶກຕ່າງໆ ຫຼື ການແຈ້ງ ຫຼື ເຜີຍແຜ່ຕໍ່ສັງຄົມ/ທຸລະກິດ.

| |
|---|
| ເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ, ລັດຖະບານ ຈະຕ້ອງສ້າງໜ່ວຍງານທີ່ຮັບຜິດຊອບການດຳເນີນການສືບຫາຂໍ້ມູນຜົນກະທົບຈາກການນຳເຂົ້າສິນຄ້າ, ການກຳນົດອັດຕາພາສີປົກປ້ອງຜົນກະທົບຈາກການນຳເຂົ້າສິນຄ້າ, ບົດແນະນຳການນຳໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ, ການປະຕິບັດພັນທະອື່ນທີ່ກ່ຽວຂ້ອງຂອງ WTO ເຊັ່ນ: ເງື່ອນໄຂຄວາມໂປ່ງໃສເຊິ່ງຈະຕ້ອງໄດ້ແຈ້ງໃຫ້ປະເທດຄູ່ຄ້າ ແລະ ສັງຄົມຮັບຊາບ ລວມທັງສະມາຊິກ ອຄລ ອື່ນໆ ກ່ຽວກັບການດຳເນີນການປົກປ້ອງ. ນອກຈາກນັ້ນ ຂະແໜງພາສີ ແລະ ອຸດສາຫະກຳ ແລະ ການຄ້າ ຍັງຈະຕ້ອງມີຄວາມຮັບຜິດຊອບເພີ່ມເຕີມກ່ຽວກັບການເກັບກຳສະຖິຕິການຄ້າ ພ້ອມທັງ ອຸດສາຫະກຳພາຍໃນ ແລະ ການບັງຄັບໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຢູ່ເຂດຊາຍແດນ. ດັ່ງນັ້ນ, ຈະມີຄ່າໃຊ້ຈ່າຍເພີ່ມເຕີມຈຳນວນ ໜຶ່ງສຳລັບວຽກງານດັ່ງກ່າວ. |

**5. ການຄົ້ນຄວ້າ**

| **5.1 ທາງເລືອກທີ່ຈະຕ້ອງໄດ້ພິຈາລະນາ**<br>(ຂໍ້ແນະນຳ-ກຳນົດຢ່າງໜ້ອຍ 3 ທາງເລືອກ /ວິທີແກ້ໄຂທີ່ ຈະຕ້ອງໄດ້ພິຈາລະນາ ລວມທັງ ທາງເລືອກ/ວິທີແກ້ ໄຂທີ່ບໍ່ ແມ່ນນິຕິກຳ) | **5.2 ຜົນຂອງການກວດກາຄືນ**<br>(ຂໍ້ແນະນຳ - ອະທິບາຍຜົນສະທ້ອນທີ່ເປັນໄປໄດ້ຂອງແຕ່ລະທາງເລືອກ/ວິທີແກ້ໄຂ) |
|---|---|
| ປະເທດອື່ນ:<br><br>ນິຕິກຳ ແລະ ຂັ້ນຕອນຂອງປະເທດອື່ນ ໂດຍສະເພາະ ປະເທດສະມາຊິກ ASEAN, ທີ່ຖືກກວດສອບກ່ຽວກັບ ການນຳໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ມີຫຼາຍປະເທດໃນພາກພື້ນ ໂດຍສະເພາະ ປະເທດ ອິນໂດເນເຊຍ, ຫວຽດນາມ, ມາເລເຊຍ ແລະ ໄທ ຊຶ່ງໄດ້ຮັບຮອງເອົານິຕິກຳ ແລະ ຂັ້ນຕອນການຈັດຕັ້ງປະຕິບັດມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ເພື່ອນຳໃຊ້ປົກປ້ອງຜູ້ຜະລິດພາຍໃນຂອງຕົນ. ຂັ້ນຕອນເຫຼົ່ານີ້ ໂດຍພື້ນຖານແລ້ວ ມີຄວາມສອດຄ່ອງຕາມກົດລະບຽບຂອງ WTO. ນິຕິກຳຂອງປະເທດເຫຼົ່ານີ້ ໂດຍສະເພາະນິຕິກຳຂອງ ສສຫວຽດນາມ, ມາເລເຊຍ ແລະ ໄທ ແມ່ນໄດ້ຄົ້ນຄວ້າເພື່ອເປັນບ່ອນອີງໃຫ້ແກ່ການສ້າງກົດໝາຍສະບັບທີ່ຖືກສະເໜີນີ້.<br><br>ສິ່ງທີ່ບໍ່ແມ່ນລະບຽບກົດໝາຍ:<br><br>ທາງເລືອກທີ່ບໍ່ແມ່ນລະບຽບການກ່ຽວກັບການແຂ່ງຂັນຂອງການນຳເຂົ້າທີ່ສົ່ງຜົນກະທົບຮ້າຍແຮງ ແມ່ນຈະບໍ່ | ຜົນຂອງການກວດສອບ ໄດ້ກຳນົດຢູ່ຂ້າງລຸ່ມ. |

| | |
|---|---|
| ຖືກນຳມາພິຈາລະນານຳໃຊ້ມາດຕະການດັ່ງກ່າວ ທີ່ອາດຈະສົ່ງຜົນດ້ານລົບຕໍ່ຜູ້ຜະລິດພາຍໃນ ແລະ ອາດຈະກະທົບຕໍ່ເສດຖະກິດໂດຍລວມ.<br><br>ລະບຽບກົດໝາຍ:<br>ການຫ້າມການນຳເຂົ້າ ຫຼື ນຳໃຊ້ໂຄຕ້າການນຳເຂົ້າ ທັງສອງຢ່າງເປັນມາດຕະການທີ່ ສປປ ລາວ ເຄີຍນຳໃຊ້ຜ່ານມາເພື່ອປົກຜູ້ຜະລິດພາຍໃນ ຫຼື ຫຼຸດຜ່ອນຜົນກະທົບຈາກການນຳເຂົ້າກ່ອນທີ່ ສປປ ລາວ ຈະເປັນສະມາຊິກ ອຄລ. ແຕ່ພາຍຫຼັງເປັນສະມາຊິກ ມາດຕະການເຫຼົ່ານີ້ແມ່ນຄັດກັບຫຼັກການຂອງ ອຄລ.<br><br>ດັ່ງນັ້ນ, ກົດໝາຍວ່າດ້ວຍ ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ສະບັບນີ້ເປັນທາງເລືອກດ້ານນິຕິກຳຢ່າງດຽວທີ່ສອດ ຄ່ອງຕາມພັນທະທີ່ ສປປ ລາວ ມີຕໍ່ສາກົນໃນຖານະທີ່ເປັນສະມາຊິກ WTO. | |

**6. ການທາບທາມຄຳເຫັນ**

| **6.1 ຜູ້ມີສ່ວນກ່ຽວຂ້ອງ ທີ່ຈະທາບທາມຄຳເຫັນ** | **6.2 ຜົນການທາບທາບຄຳເຫັນ** |
|---|---|
| (ຂໍ້ແນະນຳ - ໃຫ້ກຳນົດຜູ້ທີ່ມີສ່ວນກ່ຽວຂ້ອງທີ່ຈະຖືກທາບທາມຄຳເຫັນ ໃນໄລຍະຮ່າງນິຕິກຳ)<br><br>ພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກສ່ວນອື່ນຕໍ່ໄປນີ້ຈະໄດ້ຮັບການທາບທາມຄຳເຫັນໃສ່ຮ່າງກົດໝາຍ: ກະຊວງອຸດສາຫະກຳ ແລະ ການຄ້າ; ກະຊວງຍຸຕິທຳ; ກະຊວງການເງິນ (ກົມພາສີ); ກະຊວງການຕ່າງປະເທດ; ກະຊວງແຮງງານ;<br>ພາກເອກະຊົນ: ສະພາການຄ້າ ແລະ ສະມາຄົມທຸລະກິດການຄ້າຕ່າງໆ | (ຂໍ້ແນະນຳ - ຄຳເຫັນຈາກຜູ້ເຂົ້າຮ່ວມໃຫ້ທາບທາມຄຳ ເຫັນ) |

**7. ຄວາມສຳຄັນ**

| **7.1 ທ່າອ່ຽງທຸລະກິດທີ່ຈະຖືກກະທົບ** |
|---|
| ຂະແໜງອຸດສາຫະກຳທີ່ຖືກກະທົບ: ອຸດສາຫະກຳສະບຽງອາຫານ (ຊາ, ກາເຟ), ເບຍ, ຢາສູບ, ສີມັງ, ເຫຼັກ ແລະ ອຸດສາຫະກຳໜໍ່ແໜງຕ່າງໆ<br># ຈຳນວນຂອງທຸລະກິດ: 5 ຂະແໜງ |

ທຸລະກິດທີ່ໜ້າຈະໄດ້ຮັບຜົນກະທົບ:

ຜູ້ຜະລິດພາຍໃນ ທີ່ອາດຈະໄດ້ຮັບຜົນກະທົບຈາກການແຂ່ງຂັນກັບສິນຄ້ານຳເຂົ້າ ທີ່ໄດ້ກະທົບຈາກກົດໝາຍວ່າດ້ວຍ ການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ລວມມີຜູ້ຜະລິດ ສິນຄ້າກະສິກຳ, ເບຍລາວ, ສີມັງ, ຢາສູບ, ເຫຼັກ. ຜູ້ສົ່ງອອກ ແລະ ຜູ້ນຳເຂົ້າຂອງຕ່າງປະເທດ ອາດຈະໄດ້ຮັບຜົນກະທົບໃນກໍລະນີທີ່ ມາດຕະການດັ່ງກ່າວ ຖືກຮັບຮອງສຳລັບຜະລິດຕະພັນສະເພາະ.

**7.2 ຜົນກະທົບດ້ານການແຂ່ງຂັນ**

ນິຕິກຳທີ່ສະເໜີສ້າງ ຈະຈຳກັດການແຂ່ງຂັນ ໃນ ສປປ ລາວ: ☑ແມ່ນ ☐ບໍ່ແມ່ນ

ຖ້າແມ່ນ, ກະລຸນາອະທິບາຍວ່າເປັນໄປໄດ້ແນວໃດ ແລະ ເປັນຫຍັງ:......................................

ການແຂ່ງຂັນ ຈະຖືກຈຳກັດຈາກຜູ້ສົ່ງອອກ ແລະ ການສົ່ງອອກຂອງຕ່າງປະເທດ ທີ່ສະໜອງສິນຄ້າທີ່ຈະຖືກນຳໃຊ້ມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ. ລັກສະນະສະເພາະ ແລະ ຜົນກະທົບຂອງການຈຳກັດ ເປັນຕົ້ນ ອັດຕາພາສີທີ່ເພີ່ມຂຶ້ນ ເພື່ອໃຫ້ໂອກາດແກ່ຜູ້ຜະລິດພາຍໃນສາມາດມີເວລາໃນການປັບໂຕໃຫ້ມີຄວາມສາມາດໃນການແຂ່ງຂັນໃນສະພາບການເປີດເສລີທາງການຄ້າ.

**7.3 ພັນທະຕໍ່ສາກົນ**

ຮ່າງນິຕິກຳ ທີ່ຮຽກຮ້ອງໃຫ້ສອດຄ່ອງກັບພັນທະຕໍ່ສາກົນ ☑ແມ່ນ ☐ ບໍ່ແມ່ນ

ຖ້າແມ່ນ, ແມ່ນພັນທະອັນໃດ:

☑WTO ☐AEC ☐ FTA ☐ ອື່ນໆ (ກຳນົດແຈ້ງ) ສອດຄ່ອງກັບພັນທະ WTO ແລະ ATIGA

ຖ້າແມ່ນ, ຮ່າງນິຕິກຳທີ່ສະເໜີສ້າງ ສອດຄ່ອງກັບພັນທະຕໍ່ສາກົນນັ້ນ: ☑ແມ່ນ ☐ ບໍ່ແມ່ນ

ຮ່າງກົດໝາຍສະບັບດັ່ງກ່າວ ສອດຄ່ອງຕາມພັນທະຂອງສາກົນ ດັ່ງທີ່ກຳນົດຢູ່ໃນສັນຍາວ່າດ້ວຍມາດຕະການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ ຂອງການເຂົ້າເປັນສະມາຊິກຂອງ WTO, ບົດລາຍງານການເຂົ້າເປັນສະມາຊິກຂອງ WTO ຂອງ ສປປ ລາວ ແລະ ອາຊຽນ.

(ຂໍ້ແນະນຳ-ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບເງື່ອນໄຂຕໍ່ພັນທະສາກົນ ແມ່ນສອບຖາມເພີ່ມເຕີມນຳກົມນະໂຍບາຍການຄ້າຕ່າງເທດ ກະຊວງອຸດສາຫະກຳ ແລະ ການຄ້າ)

**7.4 ລະດັບການວິເຄາະ ແລະ ການທາບທາມຄຳເຫັນທີ່ຈຳເປັນ (ໃນໄລຍະຮ່າງນິຕິກຳ)**

| ຕົວຊີ້ວັດຄວາມສຳຄັນ | ໜ້ອຍ | ຫຼາຍ |
|---|---|---|

| | | |
|---|---|---|
| ຈຳນວນຂອງຂະແໜງອຸດສາຫະກຳ ທີ່ຖືກຜົນກະທົບ<br>(ຂໍ້ແນະນຳ - ຫຼາຍ<br>ໝາຍເຖິງມີຂະແໜງການສ່ວນໃຫຍ່/ທັງໝົດທີ່ຖືກກະທົບ) | ☐ | ☑ |
| ຈຳນວນທຸລະກິດທັງໝົດທີ່ຖືກກະທົບ<br>(ຂໍ້ແນະນຳ - ຫຼາຍ ໝາຍເຖິງ ຫຼາຍກວ່າ 30% ຂອງທຸລະກິດໃນຂະແໜງໃດໜຶ່ງ ຫຼື 20% ຂອງທຸລະກິດລາວທີ່ຖືກກະທົບ) | ☐ | ☑ |
| ຜົນກະທົບດ້ານຄ່າສິ້ນເປືອງຕໍ່ແຕ່ລະທຸລະກິດ (ສະເລ່ຍ)<br>(ຂໍ້ແນະນຳ - ຫຼາຍ ແມ່ນໝາຍເຖິງ ຫຼາຍກວ່າ 800.000 ກີບ ຕໍ່ທຸລະກິດໜຶ່ງ) | ☑ | ☐ |
| ລະດັບການປ່ຽນແປງທຽບກັບວິທີການເຮັດທຸລະກິດທີ່ມີຢູ່ແລ້ວ<br>(ຂໍ້ແນະນຳ- ຂໍ້ແນະນຳ - ຫຼາຍ ໝາຍເຖິງການປ່ຽນແປງຢ່າງຫຼວງຫຼາຍຕໍ່ການດຳເນີນທຸລະກິດ) | ☑ | ☐ |
| ການບໍ່ເຫັນດີເປັນເອກະພາບກ່ຽວກັບຮ່າງນິຕິກຳທີ່ສະເໜີສ້າງ ໂດຍພາກສ່ວນທີ່ກ່ຽວ ຂ້ອງທີ່ຖືກກະທົບ<br>(ຂໍ້ແນະນຳ-ຫຼາຍ ໝາຍຄວາມວ່າ ມີຄວາມເຫັນດີເປັນເອກະພາບລະຫວ່າງພາກ ສ່ວນທີ່ກ່ຽວຂ້ອງໜ້ອຍໜຶ່ງ/ບໍ່ມີເລີຍ) | ☑ | ☐ |
| ໂດຍທົ່ວໄປແລ້ວ, ຖ້າວ່າໜຶ່ງໃນຕົວຊີ້ວັດ ຫາກມີຄວາມສຳຄັນ ກໍຖືວ່ານິຕິກຳທີ່ສະເໜີສ້າງ ມີຄວາມສຳຄັນ ຊຶ່ງ ຈະຕ້ອງພິຈາລະນາເຮັດການວິເຄາະແບບລົງເລິກ ແລະການທາບທາມຄຳເຫັນຢ່າງກວ້າງຂວາງກັບພາກສ່ວນ ທີ່ກ່ຽວຂ້ອງກັບນິຕິກຳນັ້ນ. | | |

## 8. ການຊ່ວຍເຫຼືອໃນການປະຕິບັດຕາມລະບຽບກົດໝາຍ ແລະ ການທົບທວນຄືນ

### 8.1 ການຊ່ວຍເຫຼືອໃນການປະຕິບັດຕາມລະບຽບກົດໝາຍໃຫ້ສອດຄ່ອງ

(ຂໍ້ແນະນຳ - ກຳນົດອັນໃດແດ່)

ລັດຖະບານ ຈະສາມາດຊ່ວຍເຫຼືອທຸລະກິດໄດ້ ໂດຍສະເພາະວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນຮ່າງນິຕິກຳທີ່ສະເໜີ ຖ້າຫາກລັດຖະບານນຳໃຊ້ກົດໝາຍໃໝ່ທີ່ໄດ້ນຳສະເໜີ ນັ້ນ. ກະຊວງອຸດສາຫະກຳ ແລະ ການຄ້າ ຈະຕ້ອງໄດ້ປະສານສົມທົບກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ລວມທັງບັນດາສະມາຄົມທຸລະກິດ ທີ່ກ່ຽວຂ້ອງ ໃນການເຜີຍແຜ່ຜົນປະໂຫຍດ ແລະ ການນຳໃຊ້ມາດຕະການດັ່ງກ່າວ. ພ້ອມນັ້ນ, ກໍ່ຈະຕ້ອງໄດ້ມີການພິມເຜີຍແຜ່ຕໍ່ສາທາລະນະຊົນເພື່ອຮັບຊາບ ແລະ ເຂົ້າໃຈຕໍ່ຜົນກະທົບຈາກການນຳໃຊ້ມາດຕະການດັ່ງກ່າວ.

### 8.2 ການທົບທວນຄືນ ຫຼັງຈາກການຈັດຕັ້ງປະຕິບັດ

(ຂໍ້ແນະນຳ - ກຳນົດເວລາໃດທີ່ຄວນຈະເຮັດການທົບທວນຄືນນິຕິກຳ ຫຼັງຈາກການຈັດຕັ້ງປະຕິບັດ, ຜູ່ໃດເປັນຜູ່ເຮັດ ແລະ ກຳນົດຈຸດປະສົງ ໂດຍສະເພາະ ຂົງເຂດການທົບທວນຄືນ)

| |
|---|
| ອາດຈະມີການທົບທວນຄືນ 5 ປີ ຫຼັງຈາກມີການຈັດຕັ້ງປະຕິບັດ |

9. **ການຕົກລົງເຫັນດີ**

**ຮ່າງບົດປະເມີນຜົນກະທົບເບື້ອງຕົ້ນ (ຂັ້ນເລີ່ມຕົ້ນ/ຂັ້ນທາບທາມຄຳເຫັນ)**

☐ ຮ່າງບົດປະເມີນຜົນກະທົບເບື້ອງຕົ້ນ ຈະຕ້ອງໄດ້ຮັບການຕົກລົງເຫັນດີ ກ່ອນສົ່ງໄປຍັງກະຊວງຍຸຕິທຳ/ພະແນກຍຸຕິທຳ ເພື່ອກວດກາ ແລະ ໃຫ້ຄຳເຫັນ

☐ ເຊັນບົດປະເມີນຜົນກະທົບ (ຂັ້ນທາບທາມຄຳເຫັນ) ເພື່ອລົງທາບທາມຄຳເຫັນໃນໄລຍະ 60 ວັນ

ໄຊຊະນະ ໄຊຍະກອນ ............................. 31 JUL 2018 .............................

ຕ. ຫົວໜ້າຄະນະຮັບຜິດຊອບຮ່າງນິຕິກຳ ວັນທີ

**ຮ່າງບົດປະເມີນຜົນສະບັບສຸດທ້າຍ (ຂັ້ນສຸດທ້າຍ)**

| # | | ແມ່ນ/ບໍ່ແມ່ນ |
|---|---|---|
| 1. | ໄດ້ມີການປະເມີນຄືນຜົນກະທົບທັງໝົດ (ລວມມີຜົນກະທົບດ້ານເສດຖະກິດ, ການແຂ່ງຂັນ, ສິນທິສັນຍາສາກົນ, ສັງຄົມ ແລະ ສະພາບແວດລ້ອມ ຫຼືບໍ່? | ແມ່ນ |
| 2. | ໄດ້ມີການພິຈາລະນາຄ່າສິ້ນເປືອງໃນການປະຕິບັດຕາມລະບຽບກົດໝາຍຂອງພາກທຸລະກິດ ລວມທັງຄ່າໃຊ້ຈ່າຍສຳລັບເວລາ, ພະນັກງານ, ການຝຶກອົບຮົມ, ການແນະນຳຂອງຊ່ຽວຊານ ແລະອຸປະກອນ ຫຼືບໍ່? | ແມ່ນ |
| 3. | ໄດ້ມີການທາບທາມຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງ (ທຸລະກິດ, ລັດຖະບານ, ຊຸມຊົນໃນສັງຄົມ) ຫຼືບໍ່ ກ່ຽວກັບທາງເລືອກ/ວິທີແກ້ໄຂ ລວມທັງຄວາມຈຳເປັນ ໃນການສະເໜີຮ່າງນິຕິກຳ? | ແມ່ນ |
| 4. | ຮ່າງນິຕິກຳ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງອື່ນ ໃນລະດັບດຽວກັນ ຫຼື ສູງກວ່າ ບໍ່ ລວມທັງພັນທະຕໍ່ສາກົນ? | ແມ່ນ |
| 5. | ໄດ້ເຮັດບົດປະເມີນຜົນກະທົບດ້ານການເງິນ ຕາມເອກະສານຊ້ອນທ້າຍ ບໍ່? | ແມ່ນ |
| 6. | ເມື່ອພົບວ່າ ຜົນກະທົບ ມີຄວາມສຳຄັນ, ໄດ້ມີການວິເຄາະຜົນກະທົບແບບລົງເລິກ ແລະໄດ້ທາບທາມຄຳເຫັນກັບພາກສ່ວນທີ່ກ່ຽວຂ້ອງຢ່າງກວ້າງຂວາງ ແລະໄດ້ຄັດຕິດເປັນເອກະສານຊ້ອນທ້າຍ ບໍ່? | ແມ່ນ |
| **ຖ້າຕອບວ່າ "ບໍ່", ກະລຸນາອະທິບາຍ:** | | |

ໄຊຊະນະ ໄຊຍະກອນ ............................. 31 JUL 2018 .............................

ຕ. ຫົວໜ້າຄະນະຮັບຜິດຊອບຮ່າງນິຕິກຳ ວັນທີ

ໄດ້ເຮັດອັນໃດໃນລຸ່ມນີ້

1. ☐ ເຊັນບົດປະເມີນຜົນກະທົບ (ຂັ້ນສຸດທ້າຍ) ເພື່ອສົ່ງໄປຍັງກະຊວງຍຸຕິທຳ/ພະແນກຍຸຕິທຳ ໃຫ້ຄຶດເຫັນ ຫຼື
2. ☐ ເຊັນບົດປະເມີນຜົນກະທົບ (ຂັ້ນສຸດທ້າຍ) ພ້ອມດ້ວຍຄຳເຫັນຂອງກະຊວງຍຸຕິທຳ/ພະແນກຍຸຕິທຳ ກ່ອນພິມເຜີຍແຜ່

ໄຊຊະນະ ໄຊຍະກອນ ........................ 31 JUL 2018 ........................

໗. ຫົວໜ້າຄະນະຮັບຜິດຊອບຮ່າງນິຕິກຳ ວັນທີ

**ເອກະສານຊ້ອນທ້າຍທີ 2:**

## ບົດປະເມີນຜົນກະທົບດ້ານການເງິນແບບລະອຽດ

ສໍາລັບນິຕິກໍາທີ່ສະເໜີສ້າງ ໃຫ້ຄາດຄະເນຜົນກະທົບຕໍ່ງົບປະມານໃນລະດັບສູນກາງ, ແຂວງ, ເມືອງ) ດ້ວຍການຕື່ມຂໍ້ມູນໃສ່ຕາຕະລາງລຸ່ມນີ້, ເວັ້ນເສັຍແຕ່ນິຕິກໍານັ້ນ ຈະບໍ່ມີຜົນກະທົບດ້ານການເງິນເລີຍ.

**ຜົນກະທົບຕໍ່ງົບປະມານແຫ່ງລັດ** ☐ ສໍາຄັນຫຼາຍ ☑ ໜ້ອຍ ☐ ບໍ່ມີເລີຍ

ລະດັບລັດຖະບານ:........................................................................................

| **ສະຫຼຸບຫຍໍ້ກ່ຽວກັບຂົງເຂດຮັບຜິດຊອບໃນລັດຖະບານ:** |
|---|
| ກະຊວງອຸດສາຫະກໍາ ແລະ ການຄ້າ, ກົມນະໂຍບາຍການຄ້າຕ່າງປະເທດ |

**ລາຍຮັບ (Inflows)**

| **ເຫດຜົນທີ່ລາຍຮັບ ໄດ້ມາຈາກນິຕິກໍາທີ່ສະເໜີສ້າງ:** |
|---|
| ລັດຖະບານຈະໄດ້ລາຍຮັບຈາກການເກັບພາສີ ໃນການນໍາໃຊ້ມາດຕະການດັ່ງກ່າວ. |

| # | ແຫຼ່ງລາຍຮັບ | ລາຍລະອຽດ | ເບື້ອງຕົ້ນ ໂດລາ/ກີບ | ເປັນລາຍປີ ໂດລາ/ກີບ |
|---|---|---|---|---|
| 1 | ການອະນຸຍາດເກັບພາສີເພີ່ມຂຶ້ນ ຫຼື ຈໍາກັດປະລິມານການນໍາເຂົ້າ | ຈະກໍານົດຕາມພາຍຫຼັງ | | |

**ລາຍຈ່າຍ (Outflows)**

| **ເຫດຜົນສໍາລັບລາຍຈ່າຍທີ່ຈະເກີດຈາກນິຕິກໍາທີ່ສະເໜີສ້າງ:** |
|---|
| ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງສ້າງແບບຟອມເພື່ອໃຫ້ພາກທຸລະກິດ ສາມາດສະເໜີຕໍ່ຄະນະກໍາມະການເພື່ອດໍາເນີນການສືບຫາຂໍ້ມູນ. |

| # | ຄວາມຮັບຜິດຊອບດ້ານກົດໝາຍຕໍ່ບັນຫາ | ຄວາມຕ້ອງການດ້ານຊັບພະຍາກອນ | ເບື້ອງຕົ້ນ ໂດລາ/ກີບ | ເປັນລາຍປີ ໂດລາ/ກີບ |
|---|---|---|---|---|
| 1 | ສິ່ງພິມ ແລະ ເອກະສານ | ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງສ້າງແບບຟອມໃໝ່ຂຶ້ນ | ຈະກໍານົດຕາມພາຍຫຼັງ | |

| | | | | |
|---|---|---|---|---|
| 2 | ການໃຫ້ຄວາມຮູ້ | ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງໄດ້ເຜີຍແຜ່ກົດໝາຍດັ່ງກ່າວໃຫ້ສາທາລະນະຊົນຊາບ | | |

☐ ນີ້ແມ່ນການຄາດຄະເນຄ່າສິ້ນເປືອງທີ່ມີຄວາມເໝາະສົມໃນການຈັດຕັ້ງປະຕິບັດນິຕິກຳທີ່ສະເໜີສ້າງ